# ຄຳນຳ

ທຸກມື້ນີ້ຄົນເດີນທາງຂ້າມຊາຍແດນໄປມາຫາສູ່ກັນຫຼາຍ, ຢູ່ປະເທດຍີ່ປຸ່ນກໍເຊັ່ນດຽວກັນຈຳນວນຄົນຕ່າງປະເທດທີ່ເຮັດວຽກໃນສາຂາຕ່າງໆກໍເພີ່ມຂຶ້ນໃນແຕ່ລະປີ. ລະບົບທີ່ອະນຸຍາດໃຫ້ອາໄສໂດຍມີສະຖານະພາບການອາໄສຢູ່ແບບທັກສະສະເພາະດ້ານກໍໄດ້ເລີ່ມຂຶ້ນເຊັ່ນດຽວກັນ. ດັ່ງນັ້ນ, ໃນອະນາຄົດຜູ້ຄົນທີ່ມາຈາກຫຼາກຫຼາຍເຊື້ອຊາດ ແລະ ຫຼາກຫຼາຍພື້ນຖານທາງວັດທະນະທຳຈະມີໂອກາດໃຊ້ຊີວິດຢູ່ຊຸມຊົນດຽວກັນ ແລະ ເຮັດວຽກຢູ່ບ່ອນດຽວກັນອາດຈະມີເພີ່ມຂຶ້ນເລື້ອຍໆ.

ປຶ້ມແບບຮຽນພາສາຍີ່ປຸ່ນ『いろどり　生活の日本語』(ອິໂລະໂດະລິ ພາສາຍີ່ປຸ່ນໃນການດຳລົງຊີວິດ) ເປັນສື່ການຮຽນ-ການສອນເພື່ອເພີ່ມທັກສະໃນການສື່ສານພາສາຍີ່ປຸ່ນຂັ້ນພື້ນຖານເຊິ່ງຈຳເປັນສຳລັບຄົນຕ່າງປະເທດໃນການດຳລົງຊີວິດ ແລະ ການເຮັດວຽກຢູ່ປະເທດຍີ່ປຸ່ນ. ຄຳວ່າ: いろどり ໄດ້ມາຈາກຄວາມໝາຍພື້ນຖານຂອງຄຳວ່າ: 色を つける (ການແຕ່ງແຕ້ມສີສັນ) ແລະ ຍັງມີຄວາມໝາຍໜຶ່ງວ່າ: ປ່ຽນສະພາບ, ປ່ຽນລັກສະນະ ຫຼື ປ່ຽນຮູບຮ່າງ, ເພີ່ມຄວາມງາມ ແລະ ຄວາມໜ້າສົນໃຈຫຼາຍຂຶ້ນ. ເຫດຜົນທີ່ຕັ້ງຊື່ແບບນີ້ຍ້ອນປາດຖະໜາໃຫ້ການດຳລົງຊີວິດໃນແຕ່ລະມື້ຂອງທຸກຄົນຢູ່ຍີ່ປຸ່ນເຕັມໄປດ້ວຍສີສັນທີ່ຫຼາກຫຼາຍຈາກການໂອ້ລົມກັນ ຫຼື ແລກປ່ຽນກັບຄົນອ້ອມຂ້າງເຊັ່ນ: ເພື່ອນບ້ານ ຫຼື ເພື່ອນຮ່ວມງານ ຈຶ່ງຢາກຊ່ວຍໂດຍການເພີ່ມທັກສະດ້ານພາສາ ແລະ ການສື່ສານໃຫ້ແກ່ທຸກຄົນ.

ຈຸດພິເສດຂອງປຶ້ມແບບຮຽນເຫຼັ້ມນີ້ແມ່ນມີດັ່ງນີ້:

- ມີເນື້ອໃນທີ່ກວມເອົາຫົວຂໍ້ ແລະ ຫຼາຍໆສະຖານະການທີ່ກ່ຽວຂ້ອງກັບການດຳຊີວິດຢູ່ປະເທດຍີ່ປຸ່ນ, ຊ່ວຍໃຫ້ຜູ້ຮຽນສາມາດຮຽນຮູ້ການສື່ສານພາສາຍີ່ປຸ່ນທີ່ໃຊ້ໃນຕົວຈິງໄດ້ຢ່າງມີປະສິດທິພາບ.
- ເປົ້າໝາຍການຮຽນແຕ່ລະບົດໄດ້ສະແດງໃນຮູບແບບຂອງ Can-do ເຮັດໃຫ້ຮູ້ວ່າສາມາດເຮັດຫຍັງໄດ້ແດ່ໃນບົດຮຽນນັ້ນໄດ້ຢ່າງຊັດເຈນ.
- ຫົວຂໍ້ ແລະ ໄວຍາກອນບາງສ່ວນມີຄວາມກ່ຽວຂ້ອງກັບ『まるごと　日本のことばと文化』ເຊິ່ງເປັນປຶ້ມແບບຮຽນຕາມ JF Standard.
- ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ທີ່ຢາກຮຽນພາສາຍີ່ປຸ່ນໃນລະດັບເລີ່ມຕົ້ນ A1 ຫາ ລະດັບພື້ນຖານ A2 ທີ່ຈຳເປັນສຳລັບການດຳລົງຊີວິດ ແລະ ການເຮັດວຽກຢູ່ປະເທດຍີ່ປຸ່ນ, ພ້ອມທັງເປັນປະໂຫຍດຕໍ່ຜູ້ທີ່ຕ້ອງການສອບເສັງວັດແທກລະດັບພາສາຍີ່ປຸ່ນຂັ້ນພື້ນຖານຂອງມູນນິທິຍີ່ປຸ່ນ (JFT-Basic).
- ເພື່ອໃຫ້ທຸກຄົນໃນໂລກນີ້ສາມາດນຳໃຊ້ປຶ້ມແບບຮຽນເຫຼັ້ມນີ້ໄດ້ຕາມຄວາມຕ້ອງການຈຶ່ງໄດ້ເຜີຍແຜ່ທາງເວັບໄຊໂດຍບໍ່ໄດ້ຕີພິມອອກເປັນປຶ້ມ.

ຫວັງຢ່າງຍິ່ງວ່າປຶ້ມແບບຮຽນເຫຼັ້ມນີ້ຈະຕອບສະໜອງຕາມຈຸດປະສົງຕ່າງໆ ບໍ່ວ່າຈະເປັນຜູ້ທີ່ມີແຜນຈະມາຍີ່ປຸ່ນນັບຈາກນີ້ກໍໃຫ້ຮຽນຮູ້ສິ່ງທີ່ສາມາດເຮັດໄດ້ກ່ອນມາຍີ່ປຸ່ນ ແລະ ຜູ້ທີ່ອາໄສຢູ່ຍີ່ປຸ່ນແລ້ວແມ່ນໃຊ້ເພື່ອທົດສອບທັກສະພາສາຍີ່ປຸ່ນຂອງຕົນເພື່ອເພີ່ມສິ່ງທີ່ສາມາດເຮັດໄດ້ໃຫ້ຫຼາຍຂຶ້ນ.

ພະຈິກ 2020

ມູນນິທິຍີ່ປຸ່ນ